ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງທະນາຄານທຸລະກິດ

ເລກທີ 790 /ກຄທ

ນະຄອນຫຼວງວຽງຈັນ, ວັນທີ 30 ທັນວາ 2020

# ແຈ້ງການ

**ເຖິງ:** ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ

**ເລື່ອງ:** ແນະນຳໃຫ້ກະກຽມຄວາມພ້ອມໃນຂະບວນການປະເມີນຄວາມພຽງພໍຂອງທຶນພາຍໃນ (Internal Capital Adequacy Assessment Process: ICAAP).

- ອີງຕາມແຜນແມ່ບົດ ແລະ ແຜນຈັດຕັ້ງປະຕິບັດການພັດທະນາການຄຸ້ມຄອງທະນາຄານທຸລະກິດ ຕາມມາດຕະຖານບາເຊວ ແຕ່ປີ 2017 – 2025 ສະບັບເດືອນ ພະຈິກ 2017.

ກົມຄຸ້ມຄອງທະນາຄານທຸລະກິດ, ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ເພື່ອເປັນແນວທາງໃນການຈັດຕັ້ງປະຕິບັດຕາມແຜນແມ່ບົດ ແລະ ແຜນຈັດຕັ້ງປະຕິບັດການພັດທະນາການຄຸ້ມຄອງທະນາຄານທຸລະກິດ ຕາມມາດຕະຖານບາເຊວຂອງທະນາຄານແຫ່ງ ສປປ ລາວ ທັງເຮັດໃຫ້ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ຕໍ່ໄປນີ້ເອີ້ນວ່າ "ທະນາຄານ" ມີລະບົບການບໍລິຫານຄວາມສ່ຽງທີ່ດີ ສາມາດກວມເອົາຄວາມສ່ຽງທີ່ສຳຄັນ ຄົບທຸກດ້ານຕາມທີ່ກຳນົດໄວ້ໃນຫຼັກການການຮັກສາຄວາມພຽງພໍຂອງເງິນທຶນຂັ້ນຕ່ຳ ຕາມເສົາຄ້ຳທີ 1 (Pillar 1) ຂອງມາດຕະຖານບາເຊວ ແລະ ລວມໄປເຖິງຄວາມສ່ຽງດ້ານອື່ນໆ ທີ່ Pillar 1 ຍັງບໍ່ສາມາດຄອບຄຸມໄດ້ໝົດ. ສະນັ້ນ, ກົມຄຸ້ມຄອງທະນາຄານທຸລະກິດ ຈຶ່ງອອກແຈ້ງການແນະນຳ ໃຫ້ທະນາຄານກະກຽມຄວາມພ້ອມໃນຂະບວນການປະເມີນຄວາມພຽງພໍຂອງທຶນພາຍໃນ (The Internal Capital Adequacy Assessment Process: ICAAP) ທີ່ສອດຄ່ອງກັບລັກສະນະຄວາມສ່ຽງ (Risk Profile) ຂອງຕົນ ແລະ ຕ້ອງມີແຜນທຶນ (Capital Plan) ໂດຍຄຳນຶງເຖິງຄວາມສ່ຽງ ທີ່ອາດຈະເກີດຂຶ້ນ ໃນພາວະປົກກະຕິ ແລະ ພາວະວິກິດ ທັງໃນປະຈຸບັນ ແລະ ອະນາຄົດ ໃນລະດັບຄວາມສ່ຽງທີ່ທະນາຄານຍອມຮັບໄດ້ ເພື່ອເຮັດໃຫ້ມີທຶນພຽງພໍທີ່ຈະຮອງຮັບຄວາມເສຍຫາຍ ທີ່ເກີດອາດຈະເກີດຂຶ້ນຈາກການດຳເນີນທຸລະກິດ ລວມໄປເຖິງໃນກໍລະນີທີ່ເຫັນວ່າ ຄວາມພຽງພໍຂອງທຶນທີ່ມີຢູ່ບໍ່ພຽງພໍທີ່ຈະຮອງຮັບຄວາມສ່ຽງທັງໝົດ ທະນາຄານຄວນຮັກສາຄວາມພຽງພໍຂອງທຶນໃຫ້ສູງກວ່າອັດຕາຂັ້ນຕ່ຳ ຕາມທີ່ Pillar 1 ກຳນົດໄວ້.



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 **BNL.VTE.LS**
ໂທລະສານ: (856)-21-213108 ໂທລະສັບ: 213109-213110 **Email: BOL@bol.gov.la; www.bol.gov.la**

ພ້ອມກັນນັ້ນ, ທະນາຄານ ຕ້ອງເປັນເຈົ້າການໃນການກະກຽມຄົ້ນຄວ້າ, ເກັບກຳຂໍ້ມູນ ແລະ ສຶກສາເນື້ອໃນການຈັດຕັ້ງປະຕິບັດ ICAAP ໃຫ້ສອດຄ່ອງກັບ ແຜນແມ່ບົດເພື່ອຈັດຕັ້ງປະຕິບັດຕາມມາດຕະຖານບາເຊວຂອງຕົນ (ສຳລັບລາຍລະອຽດແນະນຳການຄົ້ນຄວ້າ ຕາມເອກະສານຊ້ອນທ້າຍ).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ.

**ວ່າການຫົວໜ້າກົມ**

ໂພທິຈັນ ທຳມະເທວາ